ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 065/ບຊລ
ນະຄອນຫຼວງວຽງຈັນ, ວັນທີ 09 MAR 2023

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປີ 2023

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2023 ເຊິ່ງຈັດຂຶ້ນໃນວັນທີ 09 ມີນາ 2023 ເວລາ 9:00 ໂມງ, ຢູ່ສຳນັກງານບໍລິສັດ ຊີມັງລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ກຳນົດເອົາວັນທີ 24 ມີນາ 2023 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 28 ເມສາ 2023, ເວລາ 9:00 ໂມງ, ສະຖານທີ່ຫ້ອງປະຊຸມຊັ້ນ 4 : ລັດ ວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະບໍລິການຂາເຂົ້າ-ຂາອອກ (ພກອ)
2. ຮັບຮອງວາລະກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບຊລ ປະຈຳປີ 2022 :
   1) ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021
   2) ພິຈາລະນາ ແລະ ຮັບຮອງ ບົດລາຍງານການດຳເນີນທຸລະກິດ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ສົກປີ 2022.
   3) ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ສົກ ປີ 2022.
   4) ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງສະພາບໍລິຫານຊຸດໃໝ່ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ.
   5) ພິຈາລະນາ ແລະ ຮັບຮອງ ການຍົກຍ້າຍໂຮງງານ ຊີມັງວັງວຽງ ຫັງ 2 ໄປຕັ້ງຢູ່ເຂດອຸດສາຫະກຳ ຊັບພະຍາກອນປຸງໃໝ່ ແຂວງຄຳມ່ວນ.
   6) ພິຈາລະນາ ແລະ ຮັບຮອງ ການສ້າງຕັ້ງບໍລິສັດ ສະໜຸນໄພ ຈຳກັດ.
   7) ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງຂອງບໍລິສັດ ຊີມັງລາວ ມະຫາຊົນ

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ອັນທອງ ສີທໍລຸກ